# 08

# ການນຳໃຊ້ ທາງດ່ວນ

ທາງດ່ວນເປັນເສັ້ນທາງທີ່ມີຄວາມສ່ຽງຕໍ່ການເກີດອຸບປະຕິເຫດສູງ ໂດຍສະເພາະຜູ້ຂັບຂີ່ທີ່ຂາດຄວາມລະມັດລະວັງ ແລະ ການຂັບລົດດ້ວຍຄວາມໄວສູງ ຈະເພີ່ມຄວາມສ່ຽງຂອງການເກີດອຸບປະຕິເຫດທີ່ຮ້າຍແຮງ.



## ທິດທາງ ແລະ ຊ່ອງຈະລາຈອນຕາມທາງດ່ວນ

ທິດທາງການຈະລາຈອນຕາມທາງດ່ວນ ແບ່ງອອກເປັນ 02 ທິດທາງ ໄປ ແລະ ກັບ ຊຶ່ງມີດອນກາງທີ່ໃຊ້ແບ່ງການຈະລາຈອນ.



## ການຂັບຂີ່ຍານພາຫະນະຕາມທາງດ່ວນ

ການຂັບຂີ່ຍານພາຫະນະຕາມທາງດ່ວນ ຕ້ອງປະຕິບັດເງື່ອນໄຂ ດັ່ງນີ້:

- ຍານພາຫະນະທີ່ເຂົ້າໄປໃນທາງດ່ວນຕ້ອງມີປ້າຍສັນຍາລັກເຕືອນ ເພື່ອນຳໃຊ້ໃນເວລາຍານພາຫະນະເກີດມີການຕິດຂັດ ຫຼື ເປ່ເພ;
- ຜູ້ທີ່ຂັບຂີ່ຍານພາຫະນະ ແລະ ຜູ້ໂດຍສານທີ່ນຳໃຊ້ທາງດ່ວນຕ້ອງໃສ່ສາຍຮັດນິລະໄພ;
- ໃນເວລາທີ່ຍານພາຫະນະກຳລັງຂັບເຄື່ອນ ແມ່ນບໍ່ອະນຸຍາດໃຫ້ຜູ້ໂດຍສານຢືນ ຫຼື ຖິ້ມສິ່ງຂອງອອກຈາກຍານພາຫະນະ;
- ໃນເວລາທີ່ຍານພາຫະນະກຳລັງຂົນສົ່ງສິນຄ້າ ຫຼື ສິ່ງຂອງຕ່າງໆ ອະນຸຍາດໃຫ້ຜູ້ຂັບຂີ່ ແລະ ຜູ້ຊ່ວຍ ນັ່ງຕາມຈຳນວນຕັ່ງທີ່ມີໃນຫ້ອງຄົນຂັບເທົ່ານັ້ນ ແລະ ບໍ່ອະນຸຍາດໃຫ້ຜູ້ຂັບຂີ່ຈອດຮັບເອົາຜູ້ໂດຍສານຕາມທາງດ່ວນ ທີ່ບໍ່ແມ່ນຈຸດພັກລົດ ຢ່າງເດັດຂາດ.



## ປະເພດຍານພາຫະນະທີ່ບໍ່ອະນຸຍາດໃຫ້ເຂົ້າທາງດ່ວນ

- ປະເພດຍານພາຫະນະທີ່ບໍ່ອະນຸຍາດ ໃຫ້ເຂົ້າທາງດ່ວນ ມີດັ່ງນີ້:ລົດຖີບ, ລົດຈັກ, ລົດທີ່ບໍ່ມີເຄື່ອງຈັກ, ລົດທີ່ນຳໃຊ້ສັດລາກແກ່;
- ລົດກົນຈັກກະສິກຳ, ລົດກົນຈັກໜັກ, ລົດຕີນເຫຼັກ;
- ລົດໃຊ້ໃນການທົດສອບ, ລົດຮຽນຂັບ;
- ລົດບັນທຸກ, ລົດພ່ວງ ທີ່ມີນ້ຳໜັກເກີນຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ວ່າດ້ວຍ ການຂົນສົ່ງທາງບົກ ຕ້ອງໄດ້ຮັບອະນຸຍາດຈາກເຈົ້າໜ້າທີ່ທີ່ກ່ຽວຂ້ອງ ຢ່າງເປັນທາງການ;
- ຍານພາຫະນະທີ່ມີການດັດແປງສະພາບເຕັກນິກທີ່ບໍ່ໄດ້ມາດຕະຖານ;
- ຍານພາຫະນະ ທີ່ມີຄວາມສ່ຽງດ້ານຄວາມປອດໄພ ແລະ ຍານພາຫະນະອື່ນ ທີ່ອອກແບບຄວາມໄວ ຕ່ຳກວ່າ 70 km/h.



## ຄວາມໄວຈຳກັດຕາມທາງດ່ວນ

- ຜູ້ຂັບຂີ່ຕ້ອງປະຕິບັດຕາມໄຟສັນຍານ, ປ້າຍ ແລະ ເຄື່ອງໝາຍຈະລາຈອນ ທີ່ຈຳກັດຄວາມໄວ ຢ່າງເຂັ້ມງວດປະເພດລົດເບົາ ໃຫ້ແລ່ນດ້ວຍຄວາມໄວແຕ່ 80–110 km/h
- ລົດບັນທຸກນ້ຳໜັກເກີນ 3.500 kg ແລະ ລົດຂົນສົ່ງຜູ້ໂດຍສານໃຫ້ແລ່ນດ້ວຍຄວາມໄວ 70–90 km/h
- ຍານພາຫະນະທຸກປະເພດທີ່ແລ່ນຜ່ານອຸໂມງທາງດ່ວນ ແມ່ນໃຫ້ໃຊ້ຄວາມໄວ ບໍ່ເກີນ 80 km/h



## ການຮັກສາໄລຍະຫ່າງ

ຜູ້ຂັບຂີ່ຍານພາຫະນະຕາມທາງດ່ວນ ຕ້ອງຮັກສາໄລຍະຫ່າງຕາມຫຼັງກັນຫຼາຍກວ່າ 100 m ທີ່ໃຊ້ຄວາມໄວ 100 km/h ແລະ ຫຼາຍກວ່າ 70 m ທີ່ໃຊ້ຄວາມໄວ 70 km/h.




ທາງດ່ວນ ລາວ-ຈີນ
LAO-CHINA
EXPRESSWAY
60

ຫ້າມແຊງຂວາ


ລົດຂະໜາດໃຫຍ່
ຂັບແນບຂວາ
LARGE VEHICLES
KEEP RIGHT


VIENTIANE CAPITAL
ບ.ບົວ
B.BOUA
ມ.ສະກາ
M.SAKA
41




ມ.ໂພນໂຮງ M.PHONHONG 11Km
ມ.ຫີນເຫີບ M.HINHERB 30Km
ມ.ວັງວຽງ M.VANGVIENG 64Km




ຫ້າມໃຊ້ໂທລະສັບ
ເວລາຂັບຂີ່
DO NOT USE
MOBILE PHONE
WHILE DRIVING


55T
5 M


0m
50m


OVERTAKING LANE
CARRIAGE WAY
EMERGENCY LANE


ETC
ສະຖານີເກັບເງິນ
TOLL GATE 300m


ອຸໂມງມິດຕະພາບລາວ-ຈີນ
LAO-CHINA FRIENDSHIP TUNNEL
500m


ລະວັງຕຳທ້າຍ
DON'T FOLLOW
TOO CLOSELY
ຮັກສາໄລຍະຫ່າງ
KEEP DISTANCE